ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---=== 000 ===---

<u>ສຳນັກງານນາຍົກລັດຖະມົນຕີ</u>

ເລກທີ: 10 /ນຍ.

ວຽງຈັນ, ວັນທີ 02-02-2002

# ດຳລັດ

# ວ່າດ້ວຍ ໂຮງຊວດຈຳ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 01/95 ສພຊ ລົງວັນທີ 8 ມີນາ 1995;
- ອີງຕາມ ກົດໝາຍວ່າດ້ວຍທຸລະກິດສະບັບເລກທີ 03/94 ສພຊ ລົງວັນທີ 18 ກໍລະກົດ 1994;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1995 ແລະ ສະບັບດັດແປງ ເລກທີ 05/ສປຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ສະບັບເລກທີ 02/90 ສປສ, ລົງວັນທີ 27 ມິຖຸນາ 1990;
- ອີງຕາມ ການສະເໜີຂອງ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດຫລັກການ, ລະບຽບການກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວຂອງໂຮງຊວດຈຳ, ແນໃສ່ແກ້ໄຂຄວາມຝືດເຄືອງທາງດ້ານການເງິນໃນເວລາຈຳເປັນ ແລະ ຮີບດ່ວນຂອງປະຊາຊົນ ລວມທັງຮັບປະກັນການຊຳລະໜີ້ສິນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມ ແລະ ສ້າງຄວາມເປັນລະບຽບຮຽບຮ້ອຍດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຮງຊວດຈຳຢູ່ໃນສັງຄົມ.

**ມາດຕາ 2. ນິຍາມຄຳສັບ**

- " ການຊວດຈຳ " ແມ່ນການຕົກລົງຂອງຄູ່ສັນຍາ ຊຶ່ງຝ່າຍໜຶ່ງ (ເອີ້ນວ່າຜູ້ຊວດຈຳ) ໄດ້ນຳຊັບສິ່ງຂອງ (ສັງຫາລິມະຊັບ) ໄປຈຳໄວ້ນຳອີກຝ່າຍໜຶ່ງ (ເອີ້ນວ່າຜູ້ຮັບຊວດຈຳ) ເພື່ອຮັບປະກັນການໃຊ້ແທນໜີ້ສິນ;

- " ໂຮງຊວດຈຳ " ແມ່ນຫົວໜ່ວຍທຸລະກິດຮັບຊວດຈຳທີ່ຖືກສ້າງຕັ້ງຂຶ້ນຕາມດຳລັດສະບັບນີ້;

- " ສັງຫາລິມະຊັບ " ແມ່ນຊັບທີ່ສາມາດເຄື່ອນຍ້າຍໄດ້;

- " ຊັບຊວດຈຳ " ແມ່ນຊັບທີ່ເອົາໄປຈຳໄວ້ນຳໂຮງຊວດຈຳ;

- " ທະນາຄານທີ່ໄດ້ຮັບມອບສິດ " ແມ່ນທະນາຄານທຸລະກິດຂອງລັດ ທີ່ໄດ້ຮັບມອບໝາຍຈາກທະນາຄານ ແຫ່ງ ສປປ ລາວ ເພື່ອພິຈາລະນາການອະນຸມັດການຂໍສ້າງຕັ້ງ ແລະ ຄຸ້ມຄອງໂຮງຊວດຈຳຢູ່ທ້ອງຖິ່ນ.

## ໝວດທີ II
## ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງໂຮງຊວດຈຳ

**ມາດຕາ 3. ການສ້າງຕັ້ງ**

ບຸກຄົນ ຫລື ນິຕິບຸກຄົນທີ່ມີຈຸດປະສົງຢາກສ້າງຕັ້ງໂຮງຊວດຈຳ ຕ້ອງປະກອບສຳນວນຄຳຮ້ອງຍື່ນຕໍ່ທະນາຄານ ແຫ່ງ ສປປ ລາວ, ສາຂາທະນາຄານ ແຫ່ງ ສປປ ລາວ ຫລື ທະນາຄານທີ່ໄດ້ຮັບມອບສິດ. ສຳນວນຄຳຮ້ອງຂໍສ້າງຕັ້ງໂຮງຊວດຈຳ ປະກອບດ້ວຍເອກະສານຢ່າງຄົບຖ້ວນ ຕາມການກຳນົດຂອງທະນາຄານ ແຫ່ງ ສປປ ລາວ.

ທະນາຄານ ແຫ່ງ ສປປ ລາວ, ສາຂາທະນາຄານ ແຫ່ງ ສປປ ລາວ ຫລື ທະນາຄານທີ່ໄດ້ຮັບມອບສິດຕ້ອງສົມທົບກັບອຳນາດການປົກຄອງທ້ອງຖິ່ນ ແລະ ເຈົ້າໜ້າທີ່ຕຳຫລວດເພື່ອພິຈາລະນາຄຳຮ້ອງຂໍສ້າງຕັ້ງ ແລະ ຕ້ອງໃຫ້ຄຳຕອບແກ່ຜູ້ຂໍອະນຸຍາດສ້າງຕັ້ງພາຍໃນກຳນົດສາມສິບວັນ ນັບແຕ່ມື້ໄດ້ຮັບຄຳຮ້ອງຂໍສ້າງຕັ້ງເປັນຕົ້ນໄປ.

ທະນາຄານ ແຫ່ງ ສປປ ລາວ ເປັນຜູ້ກຳນົດຈຳນວນໂຮງຊວດຈຳທີ່ຈະອະນຸຍາດໃຫ້ສ້າງຕັ້ງໃນແຕ່ລະທ້ອງຖິ່ນ.

ຜູ້ໄດ້ຮັບອະນຸຍາດສ້າງຕັ້ງ ຕ້ອງໄປຂຶ້ນທະບຽນວິສາຫະກິດຢູ່ຂະແໜງການຄ້າ ແລະ ຂຶ້ນທະບຽນອາກອນຢູ່ຂະແໜງການເງິນ ຕາມທີ່ກົດໝາຍໄດ້ກຳນົດໄວ້ ແລະ ຕ້ອງເສຍຄ່າທຳນຽມການອະນຸຍາດສ້າງຕັ້ງຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 4. ເງື່ອນໄຂ ການສ້າງຕັ້ງໂຮງຊວດຈຳ**

ຜູ້ທີ່ຈະໄດ້ຮັບອະນຸຍາດສ້າງຕັ້ງໂຮງຊວດຈຳຕ້ອງມີເງື່ອນໄຂ ດັ່ງນີ້:

- ມີອາຍຸແຕ່ 25 ປີຂຶ້ນໄປ;
- ມີຄຸນສົມບັດດີ, ບໍ່ເຄີຍຕ້ອງໂທດທາອາຍາໃນສະຖານລັກຊັບ, ສໍ້ໂກງ ຫລື ຍັກຍອກຊັບມາກ່ອນ;
- ມີທຶນຈົດທະບຽນເປັນເງິນສົດບໍ່ໃຫ້ຫລຸດ 50.000.000 ກີບ;
- ມີຖານະການເງິນດີ, ໄດ້ຮັບຄວາມເຊື່ອຖື ເປັນທີ່ຍອມຮັບຂອງປະຊາຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ;

**ມາດຕາ 5. ມາດຕະຖານຂອງໂຮງຊວດຈຳ**

ໂຮງຊວດຈຳ ຕ້ອງມີສະຖານທີ່ຕັ້ງເຫມາະສົມ, ມີອາຄານທີ່ໄດ້ມາດຕະຖານ, ມີຫ້ອງມີລະໄພທີ່ສາມາດກັນໄຟໄຫມ້ໄດ້ຢ່າງຫນ້ອຍສອງຊົ່ວໂມງ ຂຶ້ນໄປ ແລະ ມີອຸປະກອນອື່ນໆ ທີ່ຈຳເປັນ ເພື່ອຮັບປະກັນການດຳເນີນການຊວດຈຳໂດຍສະເພາະຮັບປະກັນຄວາມປອດໄພຕໍ່ຊັບຊວດຈຳ.

**ມາດຕາ 6. ເງິນຄ້ຳປະກັນ**

ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງໂຮງຊວດຈຳ ຕ້ອງນຳເອົາເງິນ 10% ຂອງທຶນຈົດທະບຽນມາຝາກໄວ້ໃນບັນຊີຂອງຕົນທີ່ເປີດໄວ້ນຳທະນາຄານທີ່ອອກອະນຸຍາດສ້າງຕັ້ງ ເພື່ອເປັນເງິນຄ້ຳປະກັນຊຶ່ງບໍ່ສາມາດຖອນໄດ້ເມື່ອໃດໂຮງຊວດຈຳດັ່ງກ່າວຫາກຍັງເຄື່ອນໄຫວທຸລະກິດຮັບຊວດຈຳຢູ່.

**ມາດຕາ 7. ສັນຍາຊວດຈຳ**

ການຊວດຈຳ ຕ້ອງເຮັດເປັນລາຍລັກອັກສອນ ສັນຍາຊວດຈຳຕ້ອງໃຫ້ສອດຄ່ອງກັບກົດຫມາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ປະກອບດ້ວຍເນື້ອໃນ ແລະ ເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ເງື່ອນໄຂຂອງສັນຍາຊວດຈຳ:
   - ຕ້ອງເຮັດຂຶ້ນດ້ວຍຄວາມສະຫມັກໃຈຂອງຄູ່ສັນຍາ;
   - ຊັບຊວດຈຳຕ້ອງເປັນສັງຫາລິມະຊັບ ແລະ ເປັນກຳມະສິດຂອງຜູ້ຊວດຈຳ, ຖ້າຊັບຊວດຈຳເປັນກຳມະສິດຂອງບຸກຄົນອື່ນ ຕ້ອງໄດ້ຮັບການມອບສິດຢ່າງເປັນລາຍລັກອັກສອນຈາກຜູ້ກ່ຽວ.
2. ເນື້ອໃນສັນຍາ:
   - ວັນ, ເດືອນ, ປີ ແລະ ເລກທີ ຂອງສັນຍາ;
   - ຊື່ ແລະ ທີ່ຕັ້ງ ຂອງໂຮງຊວດຈຳ;
   - ຊື່ ແລະ ນາມສະກຸນ, ອາຍຸ ແລະ ທີ່ຢູ່ ຂອງຜູ້ຊວດຈຳ;

- ຈຳນວນໜີ້ສິນທີ່ຖືກຄ້ຳປະກັນດ້ວຍຊັບຊວດຈຳ, ດອກເບ້ຍ;

- ກຳນົດເວລາຂອງສັນຍາຊວດຈຳ;

- ມູນຄ່າຕົວຈິງຂອງຊັບຊວດຈຳ;

- ລັກສະນະທັງໝົດ ຫລື ສ່ວນໃດສ່ວນໜຶ່ງຂອງຊັບຊວດຈຳເຊັ່ນ: ປະເພດ, ຊະນິດ, ຄຸນນະພາບ, ຈຳນວນ, ນ້ຳໜັກ, ບໍລິມາດ, ຂະໜາດ ແລະ ຈຸດພິເສດອື່ນທີ່ເຫັນວ່າຈຳເປັນ, ຊັບຊວດຈຳນັ້ນຕ້ອງມອບໃຫ້ຜູ້ຮັບຊວດຈຳເປັນຜູ້ປົກປັກຮັກສາ ແລະ ຕ້ອງມອບໃນວັນທີ່ໄດ້ເຊັນສັນຍາຊວດຈຳ.

## ມາດຕາ 8. ການຕີລາຄາຊັບຊວດຈຳ

ຊັບທີ່ນຳມາຊວດຈຳຕ້ອງຕີລາຄາເສຍກ່ອນ ບົນພື້ນຖານການຕົກລົງເຫັນດີຂອງຄູ່ສັນຍາ. ການຕີລາຄາຊັບດັ່ງກ່າວຕ້ອງຕີລາຄາຕາມມູນຄ່າຕົວຈິງ ແລະ ຕ່ຳສຸດບໍ່ໃຫ້ຫລຸດ 50% ຕາມລາຄາທີ່ປະກົດຕົວໃນທ້ອງຕະຫລາດ.

## ມາດຕາ 9. ດອກເບ້ຍ

ການເກັບດອກເບ້ຍຂອງໂຮງຊວດຈຳບໍ່ໃຫ້ເກີນ 3% ສູງກວ່າດອກເບ້ຍເງິນກູ້ສູງສຸດປະຈຳເດືອນຂອງທະນາຄານທຸລະກິດຂອງລັດ.

ການຄິດໄລ່ດອກເບ້ຍໃຫ້ຄິດໄລ່ເປັນວັນ ຕາມຈຳນວນວັນຊວດຈຳຕົວຈິງ. ການຊຳລະຕົ້ນທຶນ ແລະ ດອກເບ້ຍ ແມ່ນໃຫ້ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັນ.

ນອກຈາກລາຍຮັບຈາກດອກເບ້ຍດັ່ງກ່າວແລ້ວ ໂຮງຊວດຈຳບໍ່ມີສິດເກັບລາຍຮັບອື່ນໆ ນຳຜູ້ຊວດຈຳອີກ ລວມທັງຄ່າຝາກຊັບຊວດຈຳ.

ໂຮງຊວດຈຳຕ້ອງຕິດປະກາດອັດຕາດອກເບ້ຍຂອງຕົນຢູ່ບ່ອນທີ່ເປີດເຜີຍ ແລະ ສາມາດເຫັນໄດ້ງ່າຍ ແລະ ຕ້ອງປະຕິບັດຕາມອັດຕາດອກເບ້ຍທີ່ຕົນໄດ້ປະກາດນັ້ນຢ່າງເຂັ້ມງວດ.

## ມາດຕາ 10. ການປະຕິບັດສັນຍາຊວດຈຳ

ຜູ້ຊວດຈຳຕ້ອງນຳເງິນຕົ້ນທຶນ ລວມທັງດອກເບ້ຍມາໄຖ່ເອົາຊັບຊວດຈຳຂອງຕົນຄືນພາຍໃນກຳນົດເວລາທີ່ໄດ້ຕົກລົງກັນໄວ້ໃນສັນຍາ, ຖ້າຜູ້ຊວດຈຳຫາກບໍ່ມາໄຖ່ເອົາຊັບຂອງຕົນຄືນຕາມກຳນົດເວລາທີ່ບົ່ງໄວ້ໃນສັນຍາແລ້ວ ຊັບຊວດຈຳກໍຈະຕົກເປັນກຳມະສິດຂອງຜູ້ຮັບຊວດຈຳ.

ໃນກໍລະນີຊັບຊວດຈຳນັ້ນຫາກມີລາຄາສູງກວ່າໜີ້ສິນແລ້ວ ຜູ້ຮັບຊວດຈຳອາດຈະເລັ້ງເງິນເອົາ ຫລື ເອົາຊັບຊວດຈຳນັ້ນອອກຂາຍກໍໄດ້ ພາຍຫລັງທີ່ໄດ້ຫັກເອົາຕົ້ນທຶນ ແລະ ດອກເບ້ຍແລ້ວ ເງິນທີ່ເຫລືອນັ້ນຕ້ອງສົ່ງຄືນໃຫ້ຜູ້ຊວດຈຳ. ຖ້າຈຳນວນເງິນທີ່ໄດ້ຂາຍຊັບຊວດຈຳຫາກບໍ່ພຽງພໍໃນການໃຊ້ແທນໜີ້ສິນແລ້ວ ຜູ້ຮັບຊວດຈຳມີສິດທວງເອົາເງິນຈຳນວນທີ່ບໍ່ພໍນັ້ນຈາກຜູ້ຊວດຈຳຕື່ມອີກ.

ໃນກໍລະນີຜູ້ຊວດຈໍາມີຄວາມຈໍາເປັນບໍ່ສາມາດມາໄຖ່ເອົາຊັບຂອງຕົນຄືນຕາມກໍານົດເວລາຍ້ອນສາຍເຫດເຈັບເປັນ ຫລື ໄປເຮັດວຽກຢູ່ແຫ່ງອື່ນ ຕ້ອງແຈ້ງໃຫ້ຜູ້ຮັບຊວດຈໍາຊາບກ່ອນຫມົດກໍານົດເວລາຊວດຈໍາ ໂດຍມີການຢັ້ງຢືນຈາກໂຮງພະຍາບານ ຫລື ອົງການທີ່ຜູ້ກ່ຽວສັງກັດຢູ່ ແຕ່ຜູ້ຊວດຈໍາຕ້ອງມາໄຖ່ເອົາຊັບຂອງຕົນຄືນພາຍໃນກໍານົດ 15 ວັນ ພາຍຫລັງທີ່ຄວາມຈໍາເປັນນັ້ນໄດ້ສິ້ນສຸດລົງແລ້ວ.

**ມາດຕາ 11. ການຂາຍຊັບຊວດຈໍາ**

ການຂາຍຊັບຊວດຈໍາຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຊວດຈໍາຊາບກ່ອນລ່ວງຫນ້າ 7 ວັນເພື່ອໃຫ້ຜູ້ກ່ຽວເຂົ້າຮ່ວມໃນການຂາຍຊັບດັ່ງກ່າວ, ຖ້າຜູ້ຊວດຈໍາຫາກບໍ່ເຂົ້າຮ່ວມ ໂຮງຊວດຈໍາມີສິດຂາຍຊັບຊວດຈໍານັ້ນ. ການຂາຍຊັບຊວດຈໍາຕ້ອງເຮັດບົດບັນທຶກຢ່າງເປັນລາຍລັກອັກສອນ ໂດຍບອກແຈ້ງ:

- ເລກທີ, ວັນທີ, ເດືອນ ແລະ ປີ ຂອງສັນຍາຊວດຈໍາ;
- ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ ແລະ ທີ່ຢູ່ຂອງຜູ້ຊວດຈໍາ;
- ວັນທີ, ເດືອນ, ປີ ຂາຍຊັບຊວດຈໍາ ແລະ ມູນຄ່າຂອງການຂາຍຊັບຊວດຈໍາ;
- ຊື່, ນາມສະກຸນ ແລະ ທີ່ຢູ່ຂອງຜູ້ຊື້ຊັບຊວດຈໍາ.

**ມາດຕາ 12. ການສິ້ນສຸດການຊວດຈໍາ**

ການຊວດຈໍາຈະສິ້ນສຸດໃນກໍລະນີດັ່ງນີ້:

1. ຄູ່ສັນຍາໄດ້ປະຕິບັດສິດ ແລະ ພັນທະຂອງຕົນສໍາເລັດຕາມທີ່ໄດ້ກໍານົດໄວ້ໃນສັນຍາ:
2. ຄູ່ສັນຍາໄດ້ຕົກລົງຍົກເລີກສັນຍາຊວດຈໍາ.

**ມາດຕາ 13. ຂໍ້ເກືອດຫ້າມ**

ການດໍາເນີນທຸລະກິດໂຮງຊວດຈໍາ ມີບາງຂໍ້ເກືອດຫ້າມດັ່ງນີ້:

1. ເຮັດສັນຍາຊວດຈໍາກັບຜູ້ບໍ່ມີຄວາມສາມາດທາງການປະພຶດ ເປັນຕົ້ນແມ່ນ ຜູ້ທີ່ເປັນບ້າ, ເສຍຈິດ ຫລື ຜູ້ທີ່ມີອາຍຸຕໍ່າກວ່າ 18 ປີ;
2. ຮັບຊວດຈໍາຊັບສົມບັດຂອງລັດ, ລວມຫມູ່, ຊັບຂອງບຸກຄົນທີສາມ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກເຈົ້າຂອງຊັບ, ວັດຖຸບູຮານທີ່ເປັນຊັບສົມບັດຂອງຊາດ, ອາວຸດເສິກ, ທາດເບື່ອທຸກຊະນິດ ແລະ ວັດຖຸຕ້ອງຫ້າມ ຕາມການກໍານົດຂອງຂະແຫນງການທີ່ກ່ຽວຂ້ອງ ແລະ ຮັບຊວດຈໍາທີ່ໄດ້ມາໂດຍບໍ່ຖືກຕ້ອງຕາມກົດຫມາຍ;
3. ຄິດໄລ່ດອກເບ້ຍຄ້າງຈ່າຍມາບວກກັບຕົ້ນທຶນ ເພື່ອຄິດໄລ່ດອກເບ້ຍຕໍ່າ (ດອກເບ້ຍທົບຕົ້ນ);
4. ດໍາເນີນທຸລະກິດອື່ນ ໃນໂຮງຊວດຈໍາ;

5. ໃຫ້ຊວດຈຳແກ່ລູກຄ້າຜູ້ໜຶ່ງເກີນອັດຕາສ່ວນທີ່ທະນາຄານ ແຫ່ງ ສປປ ລາວ ໄດ້ກຳນົດອອກໃນແຕ່ລະໄລຍະ;
6. ເອົາຊັບຊວດຈຳອອກຈາກສະຖານທີ່ໂຮງຊວດ ເພື່ອຫາຜົນປະໂຫຍດທາງອື່ນ ຫລື ນຳໄປປ່ຽນແປງຈາກສະພາບເດີມ.

**ມາດຕາ 14. ສິດ ແລະ ພັນທະ ຂອງຜູ້ຊວດຈຳ**

ຜູ້ຊວດຈຳ ມີສິດ ແລະ ພັນທະ ດັ່ງນີ້:

- ໄດ້ຮັບເງິນຊວດຈຳຈາກຜູ້ຮັບຊວດຈຳພາຍຫລັງໄດ້ເຮັດສັນຍາສຳເລັດແລ້ວ;
- ມອບຊັບຊວດຈຳໃຫ້ຜູ້ຮັບຊວດຈຳຮັກສາໄວ້;
- ຊຳລະໜີ້ສິນທັງຕົ້ນທຶນ ແລະ ດອກເບ້ຍຕາມກຳນົດເວລາທີ່ກຳນົດໄວ້ໃນສັນຍາ;
- ທວງເອົາຊັບຊວດຈຳຄືນໃນເມື່ອຊຳລະຕົ້ນທຶນ ແລະ ດອກເບ້ຍເປັນທີ່ຮຽບຮ້ອຍແລ້ວ ຫລື ທວງເອົາມູນຄ່າທີ່ຍັງເຫລືອຈາກການຂາຍຊັບຊວດຈຳ ຫລັງຈາກຜູ້ຮັບຊວດຈຳຫັກຕົ້ນທຶນ ແລະ ດອກເບ້ຍອອກແລ້ວ;
- ທວງໃຫ້ໂຮງຊວດຈຳໃຊ້ແທນຄ່າເສຍຫາຍຕໍ່ຊັບຊວດຈຳ ຖ້າຫາກມີການເປ່ເພ, ເສຍຫາຍ, ຫລື ບໍ່ຢູ່ໃນສະພາບເດີມ ຊຶ່ງເກີດຈາກຄວາມຜິດຂອງຜູ້ຮັບຊວດຈຳ;
- ທົດແທນຈຳນວນເງິນໃຫ້ຜູ້ຮັບຊວດຈຳ ໃນກໍລະນີຊັບຊວດຈຳຖືກນຳອອກຂາຍ ແຕ່ໄດ້ເງິນບໍ່ພຽງພໍກັບໜີ້ສິນ;
- ປະຕິບັດສິດ ແລະ ພັນທະອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 15. ສິດ ແລະ ພັນທະ ຂອງໂຮງຊວດຈຳ**

ໂຮງຊວດຈຳ ມີສິດ ແລະ ພັນທະ ດັ່ງນີ້:

- ທວງໃຫ້ຜູ້ຊວດຈຳນຳຊັບຊວດຈຳ ມາໃຫ້ຕົນຮັກສາໄວ້;
- ປົກປັກຮັກສາຊັບຊວດຈຳໃຫ້ຢູ່ໃນສະພາບເດີມ;
- ທວງໃຫ້ຜູ້ຊວດຈຳຊຳລະຕົ້ນທຶນ ແລະ ດອກເບ້ຍ;
- ຂາຍຊັບຊວດຈຳ ເມື່ອໝົດກຳນົດສັນຍາຊວດຈຳ;
- ສົ່ງຄືນຊັບຊວດຈຳ ເມື່ອຜູ້ຊວດຈຳໄດ້ຊຳລະຕົ້ນທຶນ ແລະ ດອກເບ້ຍສຳເລັດແລ້ວຕາມທີ່ໄດ້ກຳນົດໄວ້ໃນສັນຍາ;
- ສົ່ງຄືນມູນຄ່າທີ່ຍັງເຫລືອຈາກການຂາຍຊັບຊວດຈຳ ຫລັງຈາກທີ່ໄດ້ຫັກຕົ້ນທຶນ ແລະ ດອກເບ້ຍອອກແລ້ວ;

- ຖືບັນຊີ, ປະຕິບັດສິດ ແລະ ພັນທະອື່ນໆ ຕາມລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ ແລະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 16. ການຄຸ້ມຄອງຊັບຊວດຈຳ**

ໂຮງຊວດຈຳ ຕ້ອງປົກປັກຮັກສາຊັບຊວດຈຳໃຫ້ຢູ່ໃນສະພາບເດີມ ຖ້າຫາກວ່າຊັບຊວດຈຳມີການເປ່ເພ ຫລື ຕົກເຮ່ຍເສຍຫາຍໃນເວລາທີ່ຕົນຄຸ້ມຄອງຢູ່ນັ້ນ ຕ້ອງສ້ອມແປງໃຫ້ຢູ່ໃນສະພາບເດີມ ຫລື ໃຊ້ແທນຕາມມູນຄ່າຂອງຊັບດັ່ງກ່າວ ຕາມລາຄາທີ່ປະກົດຕົວຢູ່ທ້ອງຕະຫລາດ.

ຜູ້ຮັບຊວດຈຳບໍ່ມີສິດນຳໃຊ້ ແລະ ໄດ້ຮັບໝາກຜົນຈາກຊັບຊວດຈຳໃດໆ ເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ໃນສັນຍາ.

**ມາດຕາ 17. ການຮັບຊວດຈຳຊັບທີ່ໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍດ້ວຍຄວາມບໍລິສຸດໃຈ**

ຖ້າໂຮງຊວດຈຳຫາກຮັບຊວດຈຳສິ່ງຂອງດ້ວຍຄວາມບໍລິສຸດໃຈ ໂດຍບໍ່ສາມາດຮູ້ໄດ້ວ່າຊັບດັ່ງກ່າວຜູ້ຊວດຈຳໄດ້ມາຢ່າງຜິດກົດໝາຍນັ້ນ ເມື່ອເຈົ້າຂອງຊັບຢາກໄດ້ຊັບນັ້ນຄືນກໍຕ້ອງຈ່າຍຕົ້ນທຶນ ແລະ ດອກເບັ້ຍ ໃຫ້ໂຮງຊວດຈຳຢ່າງຄົບຖ້ວນ ແຕ່ເຈົ້າຂອງຊັບມີສິດຮ້ອງຟ້ອງເອົາຕົ້ນທຶນ ແລະ ດອກເບັ້ຍທີ່ໄດ້ຈ່າຍໄປແລ້ວນັ້ນຈາກຜູ້ຊວດຈຳ. ໃນກໍລະນີດັ່ງກ່າວ ໂຮງຮັບຊວດຈຳຕ້ອງແຈ້ງໃຫ້ຜູ້ຊວດຈຳ ແລະ ເຈົ້າໜ້າທີ່ກ່ຽວຂ້ອງຊາບ.

**ມາດຕາ 18. ການຮັບຊວດຈຳຊັບທີ່ໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍດ້ວຍຄວາມບໍ່ບໍລິສຸດໃຈ**

ຖ້າໂຮງຊວດຈຳຫາກຮູ້ໄດ້ວ່າຊັບທີ່ນຳມາຊວດຈຳນັ້ນ ເປັນຊັບທີ່ໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍ ແຕ່ຍັງຮັບຊວດຈຳແລ້ວ, ເຈົ້າຂອງຊັບມີສິດເອົາຊັບຊວດຈຳນັ້ນຄືນ ໂດຍບໍ່ມີການທົດແທນຄ່າເສຍຫາຍໃດໆ ໃຫ້ໂຮງຊວດຈຳ, ຜູ້ຮັບຊວດຈຳສາມາດຕໍ່ວ່າເອົາຄ່າເສຍຫາຍນຳຜູ້ຊວດຈຳກໍໄດ້ ແຕ່ບໍ່ມີສິດຟ້ອງຮ້ອງຕໍ່ສານ. ນອກຈາກນີ້ ຜູ້ຮັບຊວດຈຳ ແລະ ຜູ້ຊວດຈຳອາດຈະຕ້ອງມີຄວາມຮັບຜິດທາງອາຍາອີກດ້ວຍ.

## ໝວດທີ III
## ການກວດກາ ແລະ ການລາຍງານ

**ມາດຕາ 19. ການກວດກາ**

ທະນາຄານທີ່ອະນຸຍາດໃຫ້ສ້າງຕັ້ງໂຮງຊວດຈຳ ມີໜ້າທີ່ຄຸ້ມຄອງ ແລະ ດູແລໂຮງຊວດຈຳ ໂດຍປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ ແລະ ເຈົ້າໜ້າທີ່ບ່ອນໂຮງຊວດຈຳຕັ້ງຢູ່.

ໃນການກວດກາເຈົ້າໜ້າທີ່ກ່ຽວຂ້ອງມີສິດສອບຖາມ, ກວດກາເອກະສານທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ, ສະຖານທີ່ ແລະ ວິທີເກັບມ້ຽນ-ຮັກສາຊັບຊວດຈຳນັ້ນໄດ້ໃນທຸກເວລາເມື່ອເຫັນວ່າມີຄວາມຈຳເປັນ.

ໂຮງຊວດຈຳຕ້ອງໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກແກ່ເຈົ້າໜ້າທີ່ທີ່ລົງກວດກາ.

### ມາດຕາ 20 ການລາຍງານ

ໂຮງຊວດຈຳຕ້ອງລາຍງານການເຄື່ອນໄຫວທຸລະກິດຂອງຕົນໃຫ້ທະນາຄານທີ່ອະນຸຍາດໃຫ້ສ້າງຕັ້ງຢ່າງເປັນປົກກະຕິໃນທຸກໆ ເດືອນ, 3 ເດືອນ, 6 ເດືອນ ແລະ ປີ ຕາມແບບພິມທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດໃຫ້.

## ໝວດທີ IV
## ການຍຸບເລີກ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 21. ການຍຸບເລີກ

ໂຮງຊວດຈຳຈະຖືກຍຸບເລີກໃນກໍລະນີດັ່ງຕໍ່ໄປນີ້:

- ຕາມຄຳຕັດສິນຂອງສານໃຫ້ຍຸບເລີກ ຫລື ລົ້ມລະລາຍ;
- ຕາມຄຳຕົກລົງຂອງທະນາຄານທີ່ໄດ້ຮັບມອບສິດ;
- ເຈົ້າຂອງໂຮງຊວດຈຳເສຍຊີວິດ ແລະ ບໍ່ມີຜູ້ສືບທອດກິດຈະການ;
- ຕາມການຕົກລົງຂອງກອງປະຊຸມຂາຮຸ້ນ;
- ບໍ່ສາມາດດຳເນີນທຸລະກິດໄດ້ແລ້ວ ແລະ ມີການສະເໜີຂໍຢຸດເຊົາກິດຈະການ.

ໃນກໍລະນີຍຸບເລີກຕາມຄຳຕົກລົງຂອງທະນາຄານ ທີ່ໄດ້ຮັບມອບສິດ ຫລື ເຈົ້າຂອງໂຮງຊວດຈຳເສຍຊີວິດໂດຍບໍ່ມີຜູ້ສືບທອດ ທະນາຄານທີ່ໄດ້ຮັບມອບສິດຈະເຂົ້າຄວບຄຸມກິດຈະການຊົ່ວຄາວເພື່ອທຳການຊຳລະສະສາງກັບຜູ້ຊວດຈຳ.

### ມາດຕາ 22. ມາດຕະການຕໍ່ຜູ້ລະເມີດ

ໂຮງຊວດຈຳຫາກລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການກ່າວເຕືອນ, ປັບໄໝ ຫລື ລົງໂທດທາງອາຍາ.

1. ການກ່າວເຕືອນ

ໂຮງຊວດຈຳຫາກໄດ້ລະເມີດດຳລັດສະບັບນີ້ ຈະຖືກກ່າວເຕືອນຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງຢ່າງເປັນລາຍລັກອັກສອນ ຫາກການລະເມີດດັ່ງກ່າວເປັນການລະເມີດຄັ້ງທຳອິດ ແລະ ມີລັກສະນະເບົາບາງ.

2. ການປັບໃໝ

ພາຍຫລັງທີ່ຖືກກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ຫລື ເປັນການລະເມີດຄັ້ງທຳອິດທີ່ມີລັກສະນະຫນັກຫນ່ວງ ຜູ້ລະເມີດຈະຖືກປັບໃໝແຕ່ 500.000 ກີບ ຫາ 2.000.000 ກີບ.

ພາຍຫລັງປັບໃໝແລ້ວແຕ່ບໍ່ເຂັດຫລາບ ແລະ ຍັງສືບຕໍ່ລະເມີດ ທະນາຄານທີ່ໄດ້ຮັບມອບສິດຈະຖອນໃບອະນຸຍາດສ້າງຕັ້ງໂຮງຊວດຈຳ, ໃນກໍລະນີມີການກະທຳຜິດທາງອາຍາ ຜູ້ກະທຳຜິດຈະຖືກລົງໂທດຕາມກົດຫມາຍອາຍາ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 23. ການຈັດຕັ້ງປະຕິບັດ**

ທະນາຄານ ແຫ່ງ ສປປ ລາວ, ກະຊວງພາຍໃນ, ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີຫນ້າທີ່ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 24. ຜົນບັງຄັບໃຊ້**

ບັນດາໂຮງຊວດຈຳທີ່ສ້າງຕັ້ງຂຶ້ນກ່ອນດຳລັດສະບັບນີ້ ໃຫ້ປະກອບເອກະສານຂໍສ້າງຕັ້ງຄືນໃຫມ່ໃຫ້ຖືກຕ້ອງຕາມດຳລັດສະບັບນີ້.

**ມາດຕາ 25. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ທຸກຂໍ້ກຳນົດ, ບົດບັນຍັດ ທີ່ປະກາດໃຊ້ໃນເມື່ອກ່ອນທາກຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ.**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ນາຍົກລັດຖະມົນຕີ ★

**ບຸນຍັງ ວໍລະຈິດ**